ບົດຂ່າວ

# ການສຶກສາການສັງລວມຄວາມຮູ້ດ້ານກົດໝາຍປ່າໄມ້: ບາດກ້າວສຳຄັນໃນການຄ້າໄມ້ທີ່ຖືກກົດໝາຍ

(ສຳລັບລົງຂ່າວທັນທີ)

---

**ນະຄອນຫຼວງວຽງຈັນ, 6 ພະຈິກ 2015**: ບາດກ້າວສຳຄັນໃນການສົ່ງເສີມການຄ້າໄມ້ທີ່ຖືກກົດໝາຍໃນລາວໄດ້ບັນລຸຜົນຕາມເປົ້າໝາຍທີ່ຄາດໄວ້ ພາຍຫຼັງສຳເລັດການສຶກສາການສັງລວມຄວາມຮູ້ດ້ານກົດໝາຍປ່າໄມ້. ຮ່າງບົດວິເຄາະຂອງການສຶກສາການສັງລວມນີ້ໄດ້ຮັບການເຜີຍແຜ່ ແລະ ປະກອບຄຳຄິດເຫັນເພີ່ມຕື່ມໃນກອງປະຊຸມການປຶກສາຫາລືຂອງບັນດາຫຼາຍພາກສ່ວນ ໃນວັນທີ 6 ພະຈິກ 2015 ເຊິ່ງມີຕົວແທນຈາກພາກລັດ, ຂະແໜງການປຸງແຕ່ງໄມ້ ແລະ ອົງການຈັດຕັ້ງທາງສັງຄົມເຂົ້າຮ່ວມ. ວຽກງານການສຶກສາວິເຄາະນີ້ໄດ້ຮັບການສະໜັບສະໜູນໂດຍ ໂຄງການຮ່ວມມືລະຫວ່າງ ອົງການອາຫານ ແລະ ການກະເສດ (FAO) ແລະ ທະນາຄານໂລກ, ໂຄງການຄຸ້ມຄອງປ່າໄມ້ແບບຍືນນານ (SUFORD-SU) ເຊິ່ງເປັນໂຄງການບໍລິຫານຈັດການປ່າໄມ້ແບບຍືນຍົງໂດຍການມີສ່ວນຮ່ວມຂອງຫຼາຍພາກສ່ວນ ທີ່ໄດ້ຮັບທຶນຈາກທະນາຄານໂລກ ແລະ ລັດຖະບານປະເທດຟິນແລນ, ແລະ ໂຄງການ GIZ ProFLEGT, ເຊິ່ງເປັນສ່ວນໜຶ່ງຂອງແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (Lao EU-FLEGT process).

ວຽກງານການສຶກສາການສັງລວມຄວາມຮູ້ດ້ານກົດໝາຍປ່າໄມ້ ແມ່ນການສັງລວມເອົາບັນດານິຕິກຳທີ່ກ່ຽວຂ້ອງທັງໝົດ ແລະ ວິເຄາະກ່ຽວກັບກອບນິຕິກຳປ່າໄມ້, ລວມທັງລະບຽບກົດໝາຍທີ່ກ່ຽວຂ້ອງກັບປ່າໄມ້ ແລະ ເນື້ອທີ່ປ່າ ແລະ ການນຳໃຊ້ຜະລິດຕະພັນໄມ້ ທັງຈາກປ່າຜະລິດ, ປ່າປູກ, ພື້ນທີ່ປ່າສຳປະທານ ແລະ ປ່າໄມ້ສຳລັບໃຊ້ຄົວເຮືອນ. ການສັງລວມນີ້ແມ່ນກວມເອົາທຸກຂັ້ນຕອນ ນັບຕັ້ງແຕ່ການວາງແຜນ, ການຕັດໄມ້, ການຂົນສົ່ງ, ການປຸງແຕ່ງ ແລະ ການຄ້າໄມ້ ສຳລັບໄມ້ທີ່ບໍ່ໄດ້ຜ່ານການປຸງແຕ່ງ ແລະ ເຄິ່ງປຸງແຕ່ງ ລວມທັງ ຜະລິດຕະພັນໄມ້ສຳເລັດຮູບ.

ທ່ານຄຳພຸດ ພັນດານຸວົງ, ຫົວໜ້າກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ໄດ້ກ່າວວ່າ: “ເນື່ອງຈາກວ່າຂອບຂອງລະບຽບການຕ່າງໆທີ່ໃຊ້ໃນການຄຸ້ມຄອງຂະແໜງປ່າໄມ້ແມ່ນມີຫຼາກຫຼາຍ ແລະ ກວ້າງຂວາງ, ເຊິ່ງໄດ້ຮັບຜົນມາຈາກກົດໝາຍທີ່ແຕກຕ່າງກັນໃນຂະແໜງຊັບພະຍາກອນທຳມະຊາດ ແລະ ຂະແໜງການຄ້າ, ສິ່ງເຫຼົ່ານີ້ໄດ້ເຮັດໃຫ້ເກີດຄວາມບໍ່ຈະແຈ້ງທາງດ້ານການນຳໃຊ້ກົດໝາຍ ແລະ ໜ່ວຍງານທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດ. ສ່ວນໜຶ່ງແມ່ນມາຈາກຄວາມຫຼາກຫຼາຍ ແລະ ຄວາມບໍ່ສອດຄ່ອງກັນຂອງກົດໝາຍທີ່ມີຢູ່. ດ້ວຍເຫດນັ້ນ, ການແປຄວາມໝາຍ ແລະ ການນຳໃຊ້ກົດລະບຽບແມ່ນບໍ່ສອດຄ່ອງກັນໃນຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ”. ທ່ານຄຳພຸດ ພັນດານຸວົງ ຍັງໄດ້ກ່າວຕື່ມອີກວ່າ “ການສັງລວມນິຕິກຳປ່າໄມ້ຈະສາມາດຊ່ວຍໃຫ້ຂອບຂອງລະບຽບການຕ່າງໆໃນຂະແໜງການປ່າໄມ້ຂອງ ສປປ ລາວ ມີຄວາມຊັດເຈນຂຶ້ນຕື່ມ, ແລະ ສິ່ງນີ້ຍັງມີຄວາມສຳຄັນໃນການຄຸ້ມຄອງ ແລະ ການບໍລິຫານຈັດການປ່າໄມ້ແບບຍືນຍົງ, ພ້ອມທັງເປັນການເພີ່ມຈຳນວນການປົກຫຸ້ມຂອງປ່າຂຶ້ນເຖິງ 70% ໃນປີ 2020, ເຊິ່ງໄດ້ລະບຸໄວ້ໃນແຜນຍຸດທະສາດປ່າໄມ້ຂອງກະຊວງກະສິກຳ ແລະ ປ່າໄມ້.

“ບົດວິເຄາະນີ້ຈະໃຫ້ແນວທາງແກ່ບັນດາຜູ້ອອກນະໂຍບາຍທີ່ສາມາດໃຊ້ເປັນແນວທາງໃນການປັບປຸງກອບກົດໝາຍໃນຂະແໜງການປ່າໄມ້”, ກ່າວໂດຍທ່ານ ສຕີເຟັນ ຣູດກາດ, ຜູ້ຕາງໜ້າອົງການ FAO ປະຈຳ ສ.ປ.ປ. ລາວ. ທ່ານ ສຕີເຟັນ ຍັງໄດ້ກ່າວຕື່ມວ່າ “ອຳນາດການປົກຄອງໃນຂະແໜງປ່າໄມ້ໃນລະດັບປະເທດ, ແຂວງ, ເມືອງ ແລະ ຂັ້ນບ້ານ ຈະມີຄວາມເຂົ້າໃຈເພີ່ມຕື່ມກ່ຽວກັບຂອບເຂດສິດອຳນາດ. ພາກເອກະຊົນ ແລະ ນັກລົງທຶນຕ່າງປະເທດຈະໄດ້ຮັບຜົນປະໂຫຍດ ແລະ ຄວາມຮູ້ເພີ່ມຂຶ້ນກ່ຽວກັບຂັ້ນຕອນການບໍລິຫານ”.

“ການສຶກສາການສັງລວມຄວາມຮູ້ດ້ານກົດໝາຍປ່າໄມ້ ເປັນວຽກງານການສັງລວມກົດໝາຍທີ່ສັບຊ້ອນທີ່ກ່ຽວຂ້ອງກັບຂະແໜງປ່າໄມ້ ໃນລາວ ຕະຫຼອດຕ່ອງໂສ້ການສະໜອງຜະລິດຕະພັນໄມ້ - ເຊິ່ງເລີ່ມຈາກການຈັດປະເພດພື້ນທີ່ປ່າ, ການແບ່ງເຂດແດນ, ການເກັບກຳຂໍ້ມູນ, ການອະນຸມັດ ໂຄຕ້າ, ການຄຸ້ມຄອງ ແລະ ການຕັດໄມ້, ການຂົນສົ່ງ, ການປຸງແຕ່ງ ແລະ ການສົ່ງອອກ,” ກ່າວໂດຍ ທ່ານ ຣາຍໂກະ ວໍເນີ, ທີ່ປຶກສາອາວຸໂສຂອງໂຄງການ GIZ *ການສະໜັບສະໜູນແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສ.ປ.ປ. ລາວ ກັບ ສະຫະພາບເອີຣົບ* (ProFLEGT). “ການສັງລວມນິຕິກຳກ່ຽວກັບວຽກງານປ່າໄມ້ນີ້ຈະສາມາດຊ່ວຍເຂົ້າໃນການຮ່າງນິຍາມຄວາມຖືກຕ້ອງທາງກົດໝາຍຂອງໄມ້ ພ້ອມກັບ ເງື່ອນໄຂ, ຫຼັກການ, ຕົວກວດສອບ ແລະ ເອກະສານອ້າງອີງ

ດ້ານກົດໝາຍອື່ນໆ ໃຫ້ແກ່ ແຜນງານ FLEGT VPA, ເຊິ່ງລັດຖະບານລາວກຳລັງເອົາໃຈໃສ່ໃນການຈັດຕັ້ງປະຕິບັດ”, ກ່າວເພີ່ມເຕີມໂດຍທ່ານ ຣາຍໂກະ.

ສະຫະພາບເອີຣົບ (EU) ໄດ້ລິເລີ່ມແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ເພື່ອສະກັດກັ້ນການຂຸດຄົ້ນໄມ້ທີ່ຜິດກົດໝາຍໃນທົ່ວໂລກ, ພ້ອມນັ້ນ EU ຍັງໄດ້ກະກຽມການເຈລະຈາຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA) ກັບບັນດາປະເທດຜະລິດໄມ້. ຂໍ້ຕົກລົງ VPA ແມ່ນຂໍ້ຕົກລົງການຄ້າສາກົນເຊິ່ງມີຈຸດປະສົງເພື່ອຫຼຸດຜ່ອນການຕັດໄມ້ທີ່ຜິດກົດໝາຍ ແລະ ສົ່ງເສີມການຄ້າໄມ້ທີ່ຖືກກົດໝາຍ.

ສ.ປ.ປ. ລາວ ແມ່ນໜຶ່ງໃນບັນດາປະເທດທີ່ເລີ່ມເຈລະຈາຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາດັ່ງກ່າວກັບສະຫະພາບເອີຣົບ, ເຊິ່ງໄດ້ຮັບການຊ່ວຍເຫຼືອຈາກໂຄງການ GIZ *ການສະໜັບສະໜູນແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສ.ປ.ປ. ລາວ ກັບ ສະຫະພາບເອີຣົບ* (ProFLEGT).

ProFLEGT ແມ່ນໂຄງການລິເລີ່ມຮ່ວມກັນຂອງລັດຖະບານແຫ່ງ ສ.ປ.ປ. ລາວ ແລະ ການຮ່ວມມືການພັດທະນາຂອງເຢຍລະມັນ, ເຊິ່ງເປັນໂຄງການທີ່ເຮັດວຽກຮ່ວມກັບ ກະຊວງ ກະສິກຳ ແລະ ປ່າໄມ້ (ໂດຍຜ່ານ ຫ້ອງການແຜນງານ FLEGT Standing Office ພາຍໃຕ້ການຊີ້ນຳຂອງ ກົມກວດກາປ່າໄມ້, DOFI), ກະຊວງ ອຸດສາຫະກຳ ແລະ ການຄ້າ, ແລະ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລວມທັງ ອົງການຈັດຕັ້ງອື່ນໆຂອງລັດ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນການສຶກສາ ແລະ ອຸດສາຫະກຳປຸງແຕ່ງໄມ້.

## ຂໍ້ມູນເພີ່ມເຕີມສໍາລັບບັນນາທິການ

ໃນປີ 2003, ສະຫະພາບເອີຣົບ (EU) ໄດ້ຈັດພິມແຜນວຽກການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ເພື່ອຕ້ານແລະ ສະກັດກັ້ນການຕັດໄມ້ຜິດກົດໝາຍໃນບັນດາປະເທດທີ່ນໍາເຂົ້າໄມ້. ອົງປະກອບທີ່ສໍາຄັນຂອງແຜນວຽກ FLEGT ແມ່ນລະບົບການເຂົ້າຮ່ວມແບບສະມັກໃຈ ເພື່ອຮັບປະກັນວ່າ ມີພຽງແຕ່ໄມ້ທີ່ຖືກກົດໝາຍເທົ່ານັ້ນ ທີ່ຖືກນໍາເຂົ້າຕະຫລາດ EU ຈາກປະເທດທີ່ເຫັນດີທີ່ເຂົ້າຮ່ວມໃນລະບົບນີ້. ຂອບຂອງກົດໝາຍພາຍໃນຂອງ EU ສະບັບນີ້ແມ່ນ ຖືກນາມາໃຊ້ງໃນເດືອນ ທັນວາ 2005, ແລະ ການປະຕິບັດລະບຽບກົດໝາຍໃນປີ 2008, ເຊິ່ງສາມາດຄວບຄຸມການນໍາເຂົ້າໄມ້ສູ່ຕະຫຼາດ EU ຈາກປະເທດທີ່ເຂົ້າຮ່ວມການເຈລະຈາຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (FLEGT VPAs) ກັບ EU.

ອົງປະກອບຫຼັກ ຂອງ FLEGT VPA ແມ່ນ ການພັດທະນາ ແລະ ການຈັດຕັ້ງປະຕິບັດຂອງລະບົບການຮັບປະກັນຄວາມຖືກຕ້ອງທາງກົດໝາຍຂອງໄມ້ (TLAS) ເຊິ່ງປະກອບມີ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ແຫ່ງຊາດ, ລະບົບການຄຸ້ມຄອງຕ່ອງໂສ້ການສະໜອງ, ຂັ້ນຕອນການກວດສອບໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ ຕ່ອງໂສ້ການສະໜອງ, ລະບົບການອອກໃບອະນຸຍາດ FLEGT; ແລະ ການກວດສອບລະບົບທັງໝົດແບບອິດສະຫຼະ.

ໃນກໍລະນີທີ່ເຫັນດີຕົກລົງ, VPAs ຈະລວມເອົາພັນທະ  ແລະ ແຜນວຽກຈາກທັງສອງຝ່າຍເພື່ອຈະຢຸດການຄ້າໄມ້ທີ່ຜິດກົດໝາຍ, ພ້ອມກັບ ລະບົບການອອກອະນຸຍາດເພື່ອພິສູດຄວາມຖືກຕ້ອງຕາມກົດໝາຍຂອງໄມ້ທີ່ສົ່ງອອກໄປ EU. ຂໍ້ຕົກລົງຍັງສົ່ງເສີມການບັງຄັບໃຊ້ກົດໝາຍໄມ້ທີ່ດີຂຶ້ນກວ່າເກົ່າ ແລະ ສົ່ງເສີມການມີສ່ວນຮ່ວມຂອງພາກປະຊາສັງຄົມແລະ ພາກເອກະຊົນ.

*ຂໍ້ມູນເພີ່ມເຕີມກ່ຽວກັບ ນະໂຍບາຍປ່າໄມ້ອາຊຽນສາມາດເຂົ້າເບິ່ງໄດ້ທີ່:*

http://www.asean.org/

*ຂໍ້ມູນເພີ່ມເຕີມກ່ຽວກັບ ແນວຄວາມຄິດລິເລີ່ມ ກ່ຽວກັບ ການຈັດຕັ້ງປະຕິບັດກົດຫມາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ສາມາດເຂົ້າເບິ່ງໄດ້ທີ່:*

http://ec.europa.eu/development/policies/໙interventionareas/environment/forest/forestry_intro_en.cfm

www.euflegt.efi.int

*ຂໍ້ມູນເພີ່ມເຕີມກ່ຽວກັບ ຄວາມເຂົ້າໃຈຕໍ່ກັບ ການເຄື່ອນຍ້າຍ ແລະ ການຄວບຄຸມໄມ້ ໃນ ສ.ປ.ປ. ລາວ ສາມາດເຂົ້າເບິ່ງໄດ້ທີ່:*

http://www.euflegt.efi.int/publications/-/document/25520

*ຂໍ້ມູນເພີ່ມເຕີມກ່ຽວກັບ ກົດລະບຽບການນໍາເຂົ້າໄມ້ເຂົ້າສູ່ສະຫະພາບເອີຣົບ*

*http://www.cbi.eu/market-information/timber-products/eutr-guide*

*ຂໍ້ມູນເພີ່ມເຕີມກ່ຽວກັບ FLEGT*, ເຊີນຕິດຕໍ່:

ທ່ານ ຄໍາພອນ ບຸນທະວີ, FLEGT Standing Office, ມືຖື: +856-20-9621 1288, khambtv@gmail.com